Disability Rights California
ລະບົບການໃຫ້ຄວາມສະໜັບສະໜູນ ແລະ ປົກປ້ອງ ຂອງ ແຄລີຟໍຣ໌ເນັຍ
www.disabilityrightsca.org
ໂທຣ໌ຟຣີ: (800) 776-5746
TTT ຫຼື ໂທລະເລກ ຫຼື ໂທລະພິມ: (800) 719-5798

---

## ແຈ້ງການເຖິງສ່ວນບຸກຄົນ ເລື່ອງ: ລະບຽບຂັ້ນຕອນໃນການຮ້ອງທຸກ ຂອງ DISABILITY RIGHTS CALIFORNIA ວິທີໃນການປະກອບເອກະສານການຮ້ອງທຸກ

ທ່ານສາມາດປະກອບເອກະສານຮ້ອງທຸກ ຖ້າວ່າ:

- ທ່ານເຄີຍຂໍຄວາມຊ່ວຍເຫຼືອຈາກ Disability Rights California, ແຕ່ພັດຖືກບອກກ່າວວ່າທ່ານບໍ່ສາມາດໄດ້ຮັບການຊ່ວຍເຫຼືອ;
- ປະຈຸບັນນີ້ ທ່ານພວມໄດ້ຮັບການຊ່ວຍເຫຼືອຈາກ Disability Rights California, ແຕ່ວ່າ ທ່ານພັດບໍ່ພໍໃຈກັບການຊ່ວຍເຫຼືອດັ່ງກ່າວ, ຫຼື
- ການຊ່ວຍເຫຼືອທີ່ທ່ານເຄີຍໄດ້ຮັບນັ້ນ ຊິ້ນສຸດລົງແລ້ວ ແລະ Disability Rights California ພັດປະຕິເສດທີ່ຈະໃຫ້ການຊ່ວຍເຫຼືອຕໍ່ໄປ.

ເພື່ອທຳການປະກອບຄຳຮ້ອງທຸກ, ທ່ານອາດກະທຳການດັ່ງຕໍ່ໄປນີ້:

### ຂັ້ນຕອນທີ 1 (ຕາມໃຈ) ໄປປຶກສາເລື່ອງຄວາມບໍ່ລົງລອຍກັນນີ້ ກັບພະນັກງານຂອງ Disability Rights California.

ທ່ານອາດຢາກເວົ້າລົມກ່ຽວກັບບັນຫາຂອງຕົນ ກັບບຸກຄົນທີ່ເປັນພະນັກງານຂອງ Disability Rights California. ແຕ່ວ່າທ່ານບໍ່ຈຳເປັນຕ້ອງເຮັດຂັ້ນຕອນນີ້ ຖ້າວ່າທ່ານບໍ່ຢາກເຮັດ.

### ຂັ້ນຕອນທີ 2 ຜູ້ອຳນວຍການບໍລິຫານ ຂອງ Disability Rights California

ທ່ານອາດສາມາດປະກອບເອກະສານຮ້ອງທຸກກັບຜູ້ອຳນວຍການບໍລິຫານ ຂອງ Disability Rights California ພາຍໃນເວລາ 30 ວັນ ເລີ່ມຕັ້ງແຕ່ວັນທີ ທີ່ Disability Rights California ໄດ້ທຳການຕັດສິນໃຈຕ່າງໆ ຊຶ່ງເຮັດໃຫ້ທ່ານບໍ່ພໍໃຈ.

ທ່ານອາດສາມາດປະກອບເອກະສານຮ້ອງທຸກ ໂດຍນຳໃຊ້ແບບຟອມທີ່ຄັດຕິດມາພ້ອມນີ້, ໂດຍການຂຽນຄຳຮ້ອງທຸກຂອງທ່ານໃສ່ເຈັ້ຍແຜ່ນໜຶ່ງອີກຕ່າງຫາກ, ຫຼື ດ້ວຍການການໂທຣະສັບໄປຫາ Disability Rights California. ຈົ່ງສົ່ງຄຳຮ້ອງທຸກຂອງທ່ານໄປທີ່:

Executive Director
Disability Rights California
1831 K Street
Sacramento, CA 95811
(916) 504-5800(ເກັບຄ່າໂທຢູ່ປາຍທາງ) ຫຼື (800) 776-5746
ແຟັກ: (916) 504-5809
TTT ຫຼື ໂທລະເລກ ຫຼື ໂທລະພິມ: (800) 719-5798
ອີເມລ: executivedirector@disabilityrightsca.org

ຜູ້ອຳນວຍການບໍລິຫານ ຈະທົບທວນເບິ່ງຄຳຮ້ອງທຸກຂອງທ່ານ ແລະ ແຈ້ງຄຳຕັດສິນເປັນລາຍລັກອັກສອນໃຫ້ທ່ານຊາບ ພາຍໃນເວລາ 30 ວັນ, ເວັ້ນເສັຍແຕ່ໃນກໍລະນີ ຊຶ່ງຜູ້ອຳນວຍການແຈ້ງໃຫ້ທ່ານຮູ້ວ່າ ລາວຈຳເປັນຕ້ອງໄດ້ໃຊ້ເວລາຫຼາຍກວ່ານັ້ນ.

**ຂັ້ນຕອນທີ 3 ສະພາຜູ້ອຳນວຍການ ຂອງ Disability Rights California**

ຖ້າທ່ານບໍ່ເຫັນດີກັບຄຳຕັດສິນຂອງຜູ້ອຳນວຍການບໍລິຫານ, ທ່ານອາດສາມາດຮ້ອງຂໍໃຫ້ມີການທົບທວນຄືນ ໂດຍຄະນະກຳມະການຂອງສະພາຜູ້ບໍລິຫານ ຂອງ Disability Rights California ພາຍໃນເວລາ 30 ວັນ, ນັບຕັ້ງແຕ່ວັນທີ່ຜູ້ອຳນວຍການບໍລິຫານໄດ້ທຳການຕັດສິນເປັນຕົ້ນໄປ.

ທ່ານອາດສາມາດປະກອບເອກະສານຮ້ອງທຸກ ໂດຍນຳໃຊ້ແບບຟອມທີ່ຄັດຕິດມາພ້ອມນີ້, ໂດຍການຂຽນຄຳຮ້ອງທຸກຂອງທ່ານໃສ່ເຈັ້ຍແຜ່ນໜຶ່ງອີກຕ່າງຫາກ, ຫຼື ດ້ວຍການການໂທຣະສັບໄປຫາ Disability Rights California. ຈົ່ງສົ່ງຄຳຮ້ອງຂໍຂອງທ່ານໄປທີ່:

President, Board of Directors
Disability Rights California
1831 K Street
Sacramento, CA 95811
(916) 504-5800 (ເກັບຄ່າໂທຢູ່ປາຍທາງ) ຫຼື (800) 776-5746
ແຟັກ: (916) 504-5809
TTT ຫຼື ໂທລະເລກ ຫຼື ໂທລະພິມ: (800) 719-5798
ອີເມລ: board@disabilityrightsca.org

ຄະນະກຳມະການ ຂອງສະພາຜູ້ບໍລິຫານ ຈະທົບທວນເບິ່ງຄຳຮ້ອງຂໍຂອງທ່ານ ແລະ ອອກຄຳຕັດສິນເປັນລາຍລັກອັກສອນ ພາຍໃນເວລາ 30 ວັນ, ເວັ້ນເສັຍແຕ່ປະທານຂອງສະພາດັ່ງກ່າວໄດ້ແຈ້ງໃຫ້ທ່ານຊາບ

ວ່າ ລາວຕ້ອງການເວລາຫຼາຍກວ່ານັ້ນ. ຄໍາຕັດສິນຂອງຄະນະກໍາມະການບໍລິຫານ ແມ່ນຄໍາຕັດສິນຂັ້ນສຸດທ້າຍຂອງ Disability Rights California.

## ແບບຟອມຄຳຮ້ອງທຸກຂອງສ່ວນບຸກຄົນ

ເພື່ອປະກອບເອກະສານການຮ້ອງທຸກ, ທ່ານອາດນຳໃຊ້ແບບຟອມນີ້, ຫຼື ຂຽນຄຳຮ້ອງທຸກຂອງທ່ານໃສ່ເຈັ້ຍແຜ່ນໜຶ່ງອີກຕ່າງຫາກ, ຫຼື ໂທຣະສັບໄປທີ່ (916) 504-5800 (ເກັບເງິນຢູ່ປາຍທາງ) ຫຼື (800) 776-5746 ແລະ ຮ້ອງຂໍໃຫ້ພະນັກງານຂອງ Disability Rights California ຊ່ວຍເຫຼືອໃນການຂຽນຄຳຮ້ອງທຸກຂອງທ່ານ. ທ່ານຍັງສາມາດໂທຣໄປຫາພວກເຮົາ ດ້ວຍການນຳໃຊ້ລະບົບ TTYຕາມໝາຍເລກ (800) 719-5798, ສົ່ງແຟັກໄປຫາພວກເຮົາຕາມໝາຍເລກ (916) 504-5809, ຫຼື ສົ່ງອີເມລຕາມທີ່ຢູ່ executivedirector@disabilityrightsca.org.

ຊື່ຂອງທ່ານ:

ທີ່ຢູ່ຂອງທ່ານ:

ເລກໂທຣະສັບຕອນກາງເວັນຂອງທ່ານ: (        )

ອີເມລຂອງທ່ານ:

ຖ້າວ່າທ່ານຫາກພວມຊ່ວຍປະກອບຄຳຮ້ອງທຸກໃຫ້ຜູ້ອື່ນຢູ່, ຈົ່ງບອກຊື່ຂອງພວກເຂົາເຈົ້າ:

ຈົ່ງຊີ້ແຈງວ່າຍ້ອນຫຍັງທ່ານຈຶ່ງປະກອບຄຳຮ້ອງທຸກ:

ທ່ານຢາກໃຫ້ Disability Rights California ເຮັດຫຍັງແຕກຕ່າງໄປຈາກເດີມ?